ປຶ້ມຝຶກຫັດ

# ທຳມະຊາດອ້ອມຕົວເຮົາ

## ຊັ້ນອະນຸບານສຶກສາປີທີ 3



ກະຊວງສຶກສາທິການ ແລະ ກິລາ
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
2016

ປຶ້ມເຝິກຫັດ

# ໜ່ວຍທຳມະຊາດອ້ອມຕົວເຮົາ

## ຊັ້ນອະນຸບານສຶກສາປີທີ 3


ຮຽບຮຽງໂດຍ: ແສງມະນີ ສຸພັນທະລົບ
ບຸນຜົງ ສີລາເດດ

ກວດແກ້ໂດຍ: ດຣ ອ່ອນແກ້ວ ນວນນະວົງ
ປາກຽນ ຫຼວງໄຊຊະນະ
ເກດ ພັນລັກ

ເຊົ້າໜ້າໂດຍ ດວງມາລາ ນາກບຸນຕາ



ກະຊວງສຶກສາທິການ ແລະ ກິລາ
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
2016

# ຄຳນຳ

ການກຽມຄວາມພ້ອມຂັ້ນພື້ນຖານທາງດ້ານວິທະຍາສາດເປັນເລື່ອງທີ່ຈຳເປັນ ແລະ ມີຄວາມສຳຄັນຕໍ່ການຮຽນວິທະຍາສາດໃນຊັ້ນປະຖົມ. ການສ້າງຄວາມຮູ້ຄວາມເຂົ້າໃຈຂັ້ນພື້ນຖານທາງດ້ານຄວາມຮູ້ທົ່ວໄປກ່ຽວກັບວິທະຍາສາດໃຫ້ແກ່ເດັກນ້ອຍ ດ້ວຍກິດຈະກຳທີ່ມີຄວາມມ່ວນຊື່ນກະຕຸ້ນໃຫ້ເດັກນ້ອຍໄດ້ສັງເກດ, ທົດລອງ, ຄົ້ນຄິດ ມີເຫດຜົນໃນການແກ້ໄຂບັນຫາຈະຊ່ວຍໃຫ້ເດັກນ້ອຍມັກ ແລະ ສົນໃຈຮຽນວິທະຍາສາດຫຼາຍຂຶ້ນ.

ປຶ້ມບົດເຝິກຫັດໜ່ວຍທຳມະຊາດອ້ອມຕົວເຮົາເຫຼັ້ມນີ້ຮຽບຮຽງຂຶ້ນ ເພື່ອເຝິກແອບທັກສະການສັງເກດ ແລະ ແອບເວົ້າຄຳສັບທີ່ນຳໃຊ້ໃນຊີວິດປະຈຳວັນ ແລະ ຄຳສັບວິທະຍາສາດທີ່ສອດຄ່ອງກັບມາດຖານສະມັດຖະພາບດ້ານການກຽມຄວາມພ້ອມທາງດ້ານວິທະຍາສາດສຳລັບເດັກນ້ອຍອາຍຸ 5 ປີ.

ປຶ້ມບົດເຝິກຫັດເຫຼັ້ມນີ້ປະກອບດ້ວຍ 4 ຫົວຂໍ້ເນື້ອໃນທີ່ນຳມາເຝິກແອບເວົ້າຄຳສັບພື້ນຖານກ່ຽວກັບເລື່ອງໂຮງຮຽນມີດັ່ງນີ້:

1. ສິ່ງທີ່ມີຊີວິດ.
2. ສິ່ງທີ່ບໍ່ມີຊີວິດ.
3. ເວລາ.
4. ລະດູການ.

ການນຳໃຊ້ປຶ້ມບົດເຝິກຫັດໜ່ວຍທຳມະຊາດອ້ອມຕົວເຮົາ ເຂົ້າໃນການກຽມຄວາມພ້ອມໃນການຮຽນຮູ້ທາງດ້ານວິທະຍາສາດໃຫ້ມີຄຸນນະພາບຄູສອນ ແລະ ຜູ້ປົກຄອງຄວນໃຊ້ພາຍຫຼັງທີ່ເດັກນ້ອຍໄດ້ຮຽນຮູ້ ສິ່ງທີ່ມີໃນກິດຈະກຳວົງມົນຜ່ານມາແລ້ວ, ພ້ອມກັນນັ້ນນາຍຄູ ແລະ ຜູ້ປົກຄອງຊ່ວຍແນະນຳໃຫ້ເດັກນ້ອຍ ໄດ້ເຝິກທັກສະການເວົ້າຊື່ທີ່ມີໃນຮູບພາບ ແລະ ການທາສີຮູບຕາມເນື້ອໃນທີ່ມີໃນປຶ້ມຫົວນີ້ດ້ວຍຕົນເອງ ໃຫ້ຫຼາຍຂຶ້ນ.

ພ້ອມດຽວກັນນີ້ຄະນະຮັບຜິດຊອບໃນການປັບປຸງ ແລະ ຮຽບຮຽງປຶ້ມຄູ່ມືຄູສະບັບນີ້ມີຄວາມຍິນດີເປັນຢ່າງຍິ່ງຮັບເອົາທຸກຄຳຄິດເຫັນຂອງບັນດາທ່ານ ເພື່ອປັບປຸງປຶ້ມບົດເຝິກຫັດດັ່ງກ່າວໃຫ້ມີຄຸນນະພາບດີຂຶ້ນ.

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ

# ສາລະບານ

ໜ້າ


ທຳມະຊາດອ້ອມຕົວເຮົາ ........................................................ 1

**1. ສິ່ງທີ່ມີຊີວິດ ອາທິດທີ 1 ........................................................ 2**

- ສິ່ງທີ່ມີຊີວິດ ........................................................ 3
- ສັດປີກ, ສັດນ້ຳ ແລະ ສັດບົກ ........................................................ 4
- ພືດ ........................................................ 5
- ສິ່ງທີ່ຈຳເປັນຕໍ່ຄົນ, ສັດ ແລະ ພືດ ........................................................ 6
- ການເຕີບໃຫຍ່ຂອງຄົນ ........................................................ 7
- ການເຕີບໃຫຍ່ຂອງສັດ ........................................................ 8
- ການເຕີບໃຫຍ່ຂອງພືດ ........................................................ 9
- ການເພິ່ງພາອາໄສກັນຂອງສິ່ງທີ່ມີຊີວິດ ........................................................ 10

**2. ສິ່ງທີ່ບໍ່ມີຊີວິດ ອາທິດທີ 2 ........................................................ 11**

- ສິ່ງທີ່ບໍ່ມີຊີວິດ ........................................................ 12
- ລັກສະນະ ແລະ ສ່ວນປະກອບຂອງດິນ ........................................................ 13
- ຄຸນປະໂຫຍດ ແລະ ການປົກປັກຮັກສາດິນ ........................................................ 14
- ລັກສະນະ ແລະ ຄຸນປະໂຫຍດຂອງຫີນ ........................................................ 15
- ການປ່ຽນແປງສະພາບ ແລະ ຄຸນປະໂຫຍດຂອງນ້ຳ ........................................................ 16

**3. ເວລາ ອາທິດທີ 3 ........................................................ 17**

- ກາງເວັນ ........................................................ 18
- ຊ່ວງໄລຍະເວລາຂອງກາງເວັນ ........................................................ 19
- ການປະຕິບັດຕົນໃນຕອນເຊົ້າ ........................................................ 20
- ການປະຕິບັດຕົນໃນຕອນສວາຍ ........................................................ 21
- ການປະຕິບັດຕົນໃນຕອນແລງ ........................................................ 22
- ກາງຄືນ ........................................................ 23
- ການປະຕິບັດຕົນໃນຕອນກາງຄືນ ........................................................ 24

- ຊື່ວັນໃນ 1 ອາທິດ ........................................................................ 25
- ເດືອນໃນ 1 ປີ ............................................................................... 26
- ເດືອນທີ່ເຂົ້າຮຽນ ແລະ ພັກຮຽນ ......................................................... 27

**4. ລະດູການ ອາທິດທີ 4 ...................................................................... 28**

- ລະດູການໃນປະເທດລາວ ................................................................. 29
- ລັກສະນະຂອງອາກາດໃນລະດູແລ້ງ ...................................................... 30
- ລັກສະນະອາກາດໃນລະດູຝົນ ........................................................... 31
- ຄຸນປະໂຫຍດຂອງລະດູຝົນ ............................................................... 32
- ຜົນສະທ້ອນຂອງລະດູຝົນ ................................................................. 33
- ຄຸນປະໂຫຍດຂອງລະດູແລ້ງ .............................................................. 34
- ຜົນສະທ້ອນຂອງລະດູແລ້ງ ................................................................ 35
- ການປະຕິບັດຕົນໃນຍາມໜາວ, ຍາມຮ້ອນ, ຍາມຝົນ ................................... 36

# ໜ່ວຍທຳມະຊາດອ້ອມຕົວເຮົາ









**ຫົວຂໍ້ ການຮຽນແຕ່ລະອາທິດໜ່ວຍທຳມະຊາດອ້ອມຕົວເຮົາປະກອບມີ:**

1. ສິ່ງທີ່ມີຊີວິດ.
2. ສິ່ງທີ່ບໍ່ມີຊີວິດ.
3. ເວລາ.
4. ລະດູການ.

# ສິ່ງທີ່ມີຊີວິດ





**ຫົວຂໍ້ ການຮຽນອາທິດທີ1 ສິ່ງທີ່ມີຊີວິດ:**

1. ສິ່ງທີ່ມີຊີວິດ.
2. ສິ່ງທີ່ຈໍາເປັນຕໍ່ຄົນ, ສັດ ແລະ ພືດ.
3. ການເຕີບໃຫຍ່ຂອງຄົນ ແລະ ສັດ.
4. ການເຕີບໃຫຍ່ຂອງພືດ.
5. ການເພິ່ງພາອາໄສເຊິ່ງກັນ ແລະ ກັນຂອງສິ່ງທີ່ມີຊີວິດ.

# ສິ່ງທີ່ມີຊີວິດ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ສິ່ງທີ່ມີຊີວິດ; ເຝິກທັກສະການເວົ້າ ແລະ ສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ສິ່ງທີ່ມີຊີວິດມີຫຍັງແດ່?
- ໃຫ້ເດັກນ້ອຍສະຫຼຸບ: ສິ່ງທີ່ມີຊີວິດປະກອບມີຄົນ, ສັດ ແລະ ພືດ; ຄົນ: ເດັກນ້ອຍ, ຊາວໜຸ່ມ, ຜູ້ເຖົ້າ (ແມ່ຍິງ, ຜູ້ຊາຍ); ສັດ: ສັດປີກ. ສັດນໍ້າ, ສັດບົກ; ພືດ: ຫຍ້າ, ຕົ້ນດອກໄມ້, ຕົ້ນໄມ້.
- ໃຫ້ເດັກນ້ອຍທາສີຮູບພາບສິ່ງທີ່ມີຊີວິດໂດຍນຳໃຊ້ສີຕາມໃຈ.

# ສັດປີກ, ສັດນ້ຳ ແລະ ສັດບົກ







**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ສັດປີກ, ສັດນ້ຳ ແລະ ສັດບົກ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ສັດປີກມີຫຍັງແດ່? ສັດນ້ຳມີ ຫຍັງແດ່? ສັດບົກມີຫຍັງແດ່? ຢູ່ໃນເຮືອນຂອງຫຼານມີສັດຫຍັງແດ່?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ສັດປະກອບມີສັດປີກມີ ນົກ, ເປັດ, ໄກ່; ສັດນ້ຳມີ ປາ, ກຸ້ງ, ຫອຍ ແລະ ສັດບົກມີ ງົວ, ຄວາຍ, ໝູ.
- ໃຫ້ເດັກນ້ອຍທາສີຮູບພາບສັດໂດຍນຳໃຊ້ສີຕາມໃຈ.

# ພືດ







**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ພືດ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ພືດມີຫຍັງແດ່?
- ໃຫ້ເດັກນ້ອຍສະຫຼຸບ: ພືດປະກອບມີ ຫຍ້າ, ຕົ້ນດອກໄມ້, ຕົ້ນໄມ້.
- ໃຫ້ເດັກນ້ອຍທາສີຮູບພາບພືດໂດຍນຳໃຊ້ສີຕາມໃຈ.

# ສິ່ງທີ່ຈຳເປັນຕໍ່ຄົນ, ສັດ, ພືດ









**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກສິ່ງຈຳເປັນຕໍ່ຄົນ, ສັດ ພືດ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ສິ່ງທີ່ຈຳເປັນຕໍ່ຄົນ, ສັດ, ພືດມີຫຍັງແດ່?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ສິ່ງທີ່ຈຳເປັນຕໍ່ຄົນເຮົາມີອາຫານ, ນ້ຳ, ອາກາດ, ເຄື່ອງນຸ່ງຫົ່ມ ຢາປົວພະຍາດ ແລະ ທີ່ຢູ່ອາໄສ; ສິ່ງທີ່ຈຳເປັນຕໍ່ສັດມີອາຫານ, ນ້ຳ, ອາກາດ; ສິ່ງທີ່ຈຳເປັນຕໍ່ພືດມີດິນອາຫານ, ນ້ຳ, ອາກາດ.
- ໃຫ້ເດັກນ້ອຍທາສີຮູບພາບສິ່ງທີ່ຈຳເປັນສຳລັບຄົນ, ສັດ, ພືດໂດຍນຳໃຊ້ສີຕາມໃຈ.

# ການເຕີບໃຫຍ່ຂອງຄົນ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການເຕີບໃຫຍ່ຂອງຄົນ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນໃຜແດ່?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ການເຕີບໃຫຍ່ຂອງຄົນເລີ່ມແຕ່ ນອນ, ຂວ້ຳ, ຄານ, ນັ່ງ, ຢືນ, ຍ່າງ ແລະ ແລ່ນ.
- ໃຫ້ເດັກນ້ອຍທາສີຮູບພາບເດັກນ້ອຍໂດຍນຳໃຊ້ສີຕາມໃຈ.

# ການເຕີບໃຫຍ່ຂອງສັດ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການເຕີບໃຫຍ່ຂອງໄກ່ ແລະ ກົບ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ຫຼານເຄີຍເຫັນກົບ ແລະ ໄກ່ບໍ? ການເຕີບໃຫຍ່ຂອງໄກ່ ແລະ ກົບເປັນແນວໃດ?
- ໃຫ້ເດັກນ້ອຍສະຫຼຸບ: ການເຕີບໃຫຍ່ຂອງໄກ່ເລີ່ມຕົ້ນຈາກໄຂ່, ໄກ່ນ້ອຍ, ໄກ່ໃຫຍ່; ການເຕີບໃຫຍ່ຂອງກົບເລີ່ມຕົ້ນຈາກໄຂ່, ຮວກ, ກົບນ້ອຍ, ກົບໃຫຍ່.
- ໃຫ້ເດັກນ້ອຍທາສີຮູບພາບໄກ່ ແລະ ກົບໂດຍນຳໃຊ້ສີຕາມໃຈ.

# ການເຕີບໃຫຍ່ຂອງພືດ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການເຕີບໃຫຍ່ຂອງຕົ້ນຖົ່ວ ແລະ ຜັກບົ້ງ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກໍາ:**

- ໃຫ້ເດັກນ້ອຍສັງເກດຮູບພາບ ແລະ ຕອບຄໍາຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ການເຕີບໃຫຍ່ຂອງຕົ້ນຖົ່ວ ແລະ ຜັກບົ້ງເປັນແນວໃດ? ຫຼານເຄີຍເຫັນຕົ້ນຖົ່ວ ແລະ ຜັກບົ້ງບໍ?
- ໃຫ້ເດັກນ້ອຍສະຫຼຸບ: ການເຕີບໃຫຍ່ຂອງຕົ້ນຖົ່ວເລີ່ມແຕ່ແກ່ນ, ຕົ້ນນ້ອຍ, ຕົ້ນໃຫຍ່, ດອກ ແລະ ໝາກ; ການເຕີບໃຫຍ່ ຂອງຜັກບົ້ງເລີ່ມແຕ່ແກ່ນ, ຕົ້ນນ້ອຍ, ຕົ້ນໃຫຍ່.
- ໃຫ້ເດັກນ້ອຍທາສີຮູບພາບຕົ້ນຖົ່ວ ແລະ ຜັກບົ້ງໂດຍນໍາໃຊ້ສີຕາມໃຈ.

# ການເພິ່ງພາອາໄສກັນຂອງສິ່ງທີ່ມີຊີວິດ









**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການເພິ່ງພາອາໄສກັນຂອງສິ່ງທີ່ມີຊີວິດ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ຄົນ, ສັດ, ພືດ ກິນຫຍັງເປັນອາຫານ? ແຕ່ລະມື້ຫຼານກິນເຂົ້າກັບຫຍັງ?
- ໃຫ້ເດັກນ້ອຍສະຫຼຸບ: ການເພິ່ງພາອາໄສກັນຂອງສິ່ງທີ່ມີຊີວິດແມ່ນຄົນໄດ້ຮັບອາຫານຈາກພືດ ແລະ ສັດມີ (ອາຫານຈາກພືດ: ຜັກ, ເຂົ້າ, ຖົ່ວ, ງາ, ເຜືອກ, ມັນ); (ອາຫານຈາກສັດ: ຊີ້ນ, ໜັງ, ກະດູກ ໄຂ່), ສັດໄດ້ຮັບອາຫານຈາກພືດ ແລະ ສັດມີ (ອາຫານຈາກພືດ: ຫຍ້າ, ໃບໄມ້, ເຂົ້າ) (ອາຫານຈາກສັດ: ຊີ້ນ, ປາ), ຕົວຢ່າງ: ງົວ, ຄວາຍ, ແບ້ ກິນຫຍ້າ, ໃບໄມ້; ໄກ່, ເປັດກິນເຂົ້າເປືອກ ຮຳ; ນົກກິນໝາກໄມ້ ແລະ ແມງໄມ້ ໝາ, ແມວ, ກິນຊີ້ນ, ປາ); ພືດໄດ້ຮັບອາຫານຈາກຂີ້ສັດ ຊາກພືດ, ສັດທີ່ເນົ່າເປື່ອຍ.
- ໃຫ້ເດັກນ້ອຍທາສີຮູບພາບສັດ ແລະ ຄົນໂດຍນຳໃຊ້ສີຕາມໃຈ.

# ສິ່ງທີ່ບໍ່ມີຊີວິດ



**ຫົວຂໍ້ ການຮຽນອາທິດທີ 2 ສິ່ງທີ່ບໍ່ມີຊີວິດ:**

1. ສິ່ງທີ່ບໍ່ມີຊີວິດ.
2. ດິນ.
3. ດິນ (ຕໍ່).
4. ຫີນ.
5. ນ້ຳ.

# ສິ່ງທີ່ບໍ່ມີຊີວິດ









**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກສິ່ງທີ່ບໍ່ມີຊີວິດ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ສິ່ງທີ່ບໍ່ມີຊີວິດມີຫຍັງແດ່?
- ໃຫ້ເດັກນ້ອຍສະຫຼຸບ: ສິ່ງທີ່ບໍ່ມີຊີວິດມີດິນ, ຫີນ, ນ້ຳ; ປະເພດຂອງດິນ, ດິນຮ່ວນ, ດິນໜຽວ, ດິນຊາຍ; ປະເພດຂອງຫີນມີຫີນຢູ່ໃນແມ່ນ້ຳ, ຫີນແຮ່, ຫີນໜາມໜໍ່; ປະເພດຂອງນ້ຳ ມີນ້ຳປະປາ, ນ້ຳສ້າງ ແລະ ແມ່ນ້ຳ.
- ໃຫ້ເດັກນ້ອຍທາສີຮູບພາບດິນ, ກ້ອນຫີນ ແລະ ແມ່ນ້ຳ ໂດຍນຳໃຊ້ສີຕາມໃຈ.

# ລັກສະນະ ແລະ ສ່ວນປະກອບຂອງດິນ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກລັກສະນະ ແລະ ສ່ວນປະກອບຂອງດິນ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ດິນມີປະເພດໃດແດ່? ດິນຮ່ວນ, ດິນໜຽວ, ດິນຊາຍມີລັກສະນະແນວໃດ?
- ໃຫ້ເດັກນ້ອຍສະຫຼຸບ: ລັກສະນະຂອງດິນຮ່ວນ (ດິນປູກຝັງ ຫຼື ດິນຜຸຜຸ່ຍ) ເປັນດິນທີ່ມີເສດໃບໄມ້, ເສດສັດ, ຫີນ ແລະ ຊາຍປົນຢູ່ນຳ; ດິນໜຽວ (ດິນດາກ) ເປັນດິນລະອຽດ, ໜຽວ ແລະ ອົມນ້ຳໄດ້ດີ; ດິນຊາຍເປັນເມັດນ້ອຍ, ເຫຼື້ອມ ແລະ ນ້ຳຜ່ານໄດ້ດີ.
- ໃຫ້ເດັກນ້ອຍທາສີຮູບພາບຕົ້ນໄມ້ໂດຍນຳໃຊ້ສີຕາມໃຈ.

# ຄຸນປະໂຫຍດ ແລະ ການປົກປັກຮັກສາດິນ






**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຄຸນປະໂຫຍດ ແລະ ການປົກປັກຮັກສາດິນ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ດິນຮ່ວນ, ດິນໜຽວ, ດິນຊາຍມີຄຸນປະໂຫຍດແນວໃດ?
- ໃຫ້ເດັກນ້ອຍສະຫຼຸບ: ຄຸນປະໂຫຍດຂອງດິນດິນຮ່ວນໃຊ້ໄວ້ປູກພືດ, ເຮັດໄຮ່, ເຮັດນາ, ເຮັດສວນດິນໜຽວໃຊ້ໄວ້ ປັ້ນເຄື່ອງໃຊ້ ໝໍ້, ຄົກ, ຖ້ວຍ, ບ່ວງ, ເຕົ້າດອກໄມ້ ແລະ ເຄື່ອງຫຼິ້ນມີລົດ, ສັດ, ໝາກໄມ້ດອກໄມ້; ດິນຊາຍໃຊ້ໄວ້ປະສົມກັບນ້ຳ, ຊີມັງ ແລະ ຫີນເພື່ອກໍ່ສ້າງເຮືອນ; ການປົກປັກຮັກສາດິນ: ປູກຫຍ້າ ແລະ ຕົ້ນໄມ້ໃສ່ໜ້າດິນ.
- ໃຫ້ເດັກນ້ອຍທາສີຮູບພາບຄົນ ແລະ ເຄື່ອງໃຊ້ໂດຍນຳໃຊ້ສີຕາມໃຈ.

# ລັກສະນະ ແລະ ຄຸນປະໂຫຍດຂອງຫີນ







**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກລັກສະນະ, ຮູບຮ່າງ, ຂະໜາດ ແລະ ຄຸນປະໂຫຍດຂອງຫີນ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ຫຼານເຄີຍເຫັນຫີນບໍ? ຫີນມີລັກສະນະ, ຂະໜາດແນວໃດ? ມີຄຸນປະໂຫຍດແນວໃດ?
- ໃຫ້ເດັກນ້ອຍສະຫຼຸບ: ຫີນມີລັກສະນະແຂງ ແລະ ມີຮູບຮ່າງລ່ຽມມົນທີ່ແຕກຕ່າງກັນ; ມີຂະໜາດນ້ອຍ, ໃຫຍ່; ຄຸນປະໂຫຍດຂອງຫີນໃຊ້ໄວ້ກໍ່ສ້າງເຮືອນ, ຂົວ, ທົ່ນທາງ; ເຮັດເຄື່ອງໃຊ້ປະເພດ ຖ້ວຍຈອກ, ກາໂລປູເຮືອນ; ເຮັດເຄື່ອງປະດັບປະເພດ ສາຍຄໍ, ສາຍແຂນ, ແຫວນ.
- ໃຫ້ເດັກນ້ອຍທາສີຮູບພາບຫີນໂດຍນຳໃຊ້ສີຕາມໃຈ.

# ການປ່ຽນແປງສະພາບ ແລະ ປະໂຫຍດຂອງນ້ຳ









**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການປ່ຽນແປງ ແລະ ຄຸນປະໂຫຍດຂອງນ້ຳ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ນ້ຳມີການປ່ຽນແປງສະພາບແນວໃດ? ຄຸນປະໂຫຍດຂອງນ້ຳມີຫຍັງແດ່?
- ໃຫ້ເດັກນ້ອຍສະຫຼຸບ: ການປ່ຽນແປງສະພາບຂອງນ້ຳມີນ້ຳຮ້ອນ, ນ້ຳເຢັນ; ຄຸນປະໂຫຍດຂອງນ້ຳໃຊ້ໄວ້ອາບ, ດື່ມ, ລ້າງສິ່ງຂອງ ແລະ ຫົດຕົ້ນໄມ້.
- ໃຫ້ເດັກນ້ອຍທາສີຮູບພາບເດັກນ້ອຍໂດຍນຳໃຊ້ສີຕາມໃຈ.

# ເວລາ





**ຫົວຂໍ້ ການຮຽນອາທິດທີ 3 ເວລາ:**

1. ພາງເວັນ.
2. ພາງເວັນ (ຕໍ່).
3. ພາງຄືນ.
4. ວັນໃນ 1 ອາທິດ.
5. ເດືອນໃນ 1ປີ.

# ກາງເວັນ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກກາງເວັນ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ກາງເວັນແມ່ນຊ່ວງເວລາໃດ? ກາງເວັນປະກອບມີຈັກຕອນຄືຕອນໃດແດ່?
- ໃຫ້ເດັກນ້ອຍສະຫຼຸບ: ກາງເວັນເປັນຊ່ວງເວລາທີ່ດວງອາທິດ ຫຼື ຕາເວັນຂຶ້ນຈົນຮອດດວງອາທິດຕົກ ເຊິ່ງມີ 3 ຕອນ ມີຕອນເຊົ້າ, ຕອນສວາຍ ແລະ ຕອນແລງ.
- ໃຫ້ເດັກນ້ອຍທາສີຮູບພາບທຳມະຊາດໂດຍນຳໃຊ້ສີຕາມໃຈ.

# ຊ່ວງໄລຍະເວລາຂອງກາງເວັນ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊ່ວງໄລຍະເວລາກາງເວັນ, ຝຶກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ຕອນເຊົ້າ, ຕອນສວາຍ, ຕອນແລງແມ່ນຊ່ວງໄລຍະໃດ?
- ໃຫ້ເດັກນ້ອຍສະຫຼຸບ: ຕອນເຊົ້າເຮົາຈະເຫັນດວງອາທິດຂຶ້ນເພິ່ນເອີ້ນວ່າຕອນເຊົ້າເລີ້ມເວລາປະມານ 6:00ໂມງ-10:00ໂມງ; ຕອນສວາຍເຮົາຈະເຫັນດວງອາທິດຢູ່ຊື່ຫົວເຮົາເພິ່ນເອີ້ນວ່າຕອນທ່ຽງ ຫຼື ຕອນສວາຍເຊິ່ງເລີ້ມແຕ່ເວລາ12:00ໂມງ-13:00ໂມງ; ຕອນແລງ ເຮົາເຫັນດວງອາທິດລົງເພິ່ນເອີ້ນວ່າຕອນແລງເຊິ່ງເລີ້ມແຕ່14:00ໂມງ-18:00ໂມງ (4:00ໂມງແລງ-6:00ໂມງແລງ).
- ໃຫ້ເດັກນ້ອຍທາສີຮູບພາບເດັກນ້ອຍໂດຍນຳໃຊ້ສີຕາມໃຈ.

# ການປະຕິບັດຕົນໃນຕອນເຊົ້າ







**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການປະຕິບັດຕົນໃນຕອນເຊົ້າ;ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ຄວນປະຕິບັດຕົນແນວໃດໃນການມາໂຮງຮຽນໃນຕອນເຊົ້າ?
- ໃຫ້ເດັກນ້ອຍສະຫຼຸບ: ການປະຕິບັດຕົນໃນຕອນເຊົ້າມາໂຮງຮຽນໃຫ້ທັນເວລາ, ລຽນແຖວ, ເຄົາລົບທຸງ ຫັດກາຍ ແລະ ຮຽນໜັງສື.
- ໃຫ້ເດັກນ້ອຍທາສີຮູບພາບເດັກນ້ອຍໂດຍນຳໃຊ້ສີຕາມໃຈ.

# ການປະຕິບັດຕົນໃນຕອນສວາຍ









**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການປະຕິບັດຕົນໃນຕອນສວາຍ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ຄວນປະຕິບັດຕົນແນວໃດໃນຕອນສວາຍ?
- ໃຫ້ເດັກນ້ອຍສະຫຼຸບ: ການປະຕິບັດຕົນໃນຕອນສວາຍລ້າງມືກ່ອນກິນເຂົ້າ, ກິນເຂົ້າທ່ຽງ, ນອນພັກຜ່ອນ, ມ້ຽນບ່ອນນອນ.
- ໃຫ້ເດັກນ້ອຍທາສີຮູບພາບເດັກນ້ອຍໂດຍນຳໃຊ້ສີຕາມໃຈ.

# ການປະຕິບັດຕົນໃນຕອນແລງ







**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການປະຕິບັດຕົນໃນຕອນແລງ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ຄວນປະຕິບັດຕົນແນວໃດໃນຕອນແລງ?
- ໃຫ້ເດັກນ້ອຍສະຫຼຸບ: ການປະຕິບັດຕົນໃນຕອນແລງ ຮຽນໜັງສື,ຫຼິ້ນ ແລະ ກັບເມືອເຮືອນ.
- ໃຫ້ເດັກນ້ອຍທາສີຮູບພາບເດັກນ້ອຍໂດຍນຳໃຊ້ສີຕາມໃຈ.

# ກາງຄືນ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊ່ວງເວລາໃນຕອນກາງຄືນ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ຕອນກາງຄືນແມ່ນຊ່ວງເວລາໃດ? ເລີ່ມແຕ່ຈັກໂມງຫາຈັກໂມງ?
- ໃຫ້ເດັກນ້ອຍສະຫຼຸບ: ກາງຄືນເປັນຊ່ວງເວລາທີ່ດວງອາທິດຕົກຈົນຮອດດວງອາທິດຂຶ້ນເລີ້ມແຕ່ເວລາ 18:00ໂມງ-6:00ໂມງເຊົ້າ (6:00ໂມງແລງ-6:00ໂມງເຊົ້າ).
- ໃຫ້ເດັກນ້ອຍທາສີຮູບພາບໝູ່ບ້ານໂດຍນຳໃຊ້ສີຕາມໃຈ.

# ການປະຕິບັດຕົນໃນຕອນກາງຄືນ







**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການປະຕິບັດຕົນໃນຕອນກາງຄືນ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ຄວນເຮັດຫຍັງແດ່ໃນຕອນກາງຄືນ?
- ໃຫ້ເດັກນ້ອຍສະຫຼຸບ: ການປະຕິບັດຕົນໃນຕອນກາງຄືນຫຼິ້ນຢູ່ໃນເຮືອນ, ກິນເຂົ້າແລງ, ຮຽນໜັງສື ແລະ ນອນ.
- ໃຫ້ເດັກນ້ອຍທາສີຮູບພາບເດັກນ້ອຍໂດຍນຳໃຊ້ສີຕາມໃຈ.

# ວັນໃນ 1 ອາທິດ




**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ວັນໃນ 1 ອາທິດ, ກິດຈະກຳໃນມື້ນີ້, ມື້ວານ, ມື້ອື່ນ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ອາທິດໜຶ່ງມີຈັກວັນ? ຄືວັນຫຍັງແດ່? ມື້ວານນີ້ຫຼານໄດ້ເຮັດຫຍັງແດ່? ມື້ນີ້ຫຼານເຮັດຫຍັງແດ່? ມື້ອື່ນຫຼານຈະເຮັດຫຍັງ?
- ໃຫ້ເດັກນ້ອຍສະຫຼຸບ: ຊື່ວັນໃນ 1 ອາທິດ ຄື ວັນອາທິດ, ວັນຈັນ, ວັນອັງຄານ, ວັນພຸດ, ວັນພະຫັດ ວັນສຸກ ແລະ ວັນເສົາ; ກິດຈະກຳໃນມື້ນີ້: ສົນທະນາກິດຈະກຳທີ່ປະຕິບັດໃນມື້ນີ້ (ມື້ນີ້ເຮັດຫຍັງ) ມື້ວານ: ສົນທະນາກິດຈະກຳທີ່ປະຕິບັດໃນມື້ວານ (ມື້ວານນີ້ໄດ້ເຮັດຫຍັງ) ມື້ອື່ນສົນທະນາກິດຈະກຳທີ່ປະຕິບັດໃນມື້ອື່ນ (ມື້ອື່ນຈະເຮັດຫຍັງ).
- ໃຫ້ເດັກນ້ອຍທາສີຮູບພາບຫ້ອງວັນໃນ 1 ອາທິດໂດຍນຳໃຊ້ສີຕາມໃຈ.

# ເດືອນໃນ 1ປີ




**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ເດືອນໃນ 1 ປີ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດຕາຕາລາງ ແລະ ຕອບຄຳຖາມດັ່ງນີ້: ໃນ 1 ປີມີຈັກເດືອນ? ຄືເດືອນໃດແດ່?
- ໃຫ້ເດັກນ້ອຍສະຫຼຸບ: ປີໜຶ່ງມີ 12 ເດືອນ: ໜຶ່ງເດືອນມັງກອນ, ສອງເດືອນກຸມພາ, ສາມເດືອນມີນາ ສີ່ເດືອນເມສາ, ຫ້າເດືອນພຶດສະພາ, ຫົກເດືອນມິຖຸນາ, ເຈັດເດືອນກໍລະກົດ, ແປດເດືອນສິງຫາ, ເກົ້າເດືອນກັນຍາ, ສິບເດືອນຕຸລາ, ສິບເອັດເດືອນພະຈິກ ແລະ ສິບສອງເດືອນທັນວາ.
- ໃຫ້ເດັກນ້ອຍທາສີຮູບພາບຫ້ອງເດືອນໃນ 1 ປີໂດຍນຳໃຊ້ສີຕາມໃຈ.

# ເດືອນທີ່ເຂົ້າຮຽນ ແລະ ພັກຮຽນ







**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກເດືອນທີ່ເຂົ້າຮຽນ, ເດືອນທີ່ພັກຮຽນ, ກິດຈະກຳທີ່ເຮັດໃນເວລາພັກຮຽນ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ເດືອນທີ່ເຂົ້າຮຽນເລີ່ມແຕ່ເດືອນ ໃດຫາເດືອນໃດ? ເດືອນທີ່ພັກຮຽນເລີ່ມແຕ່ເດືອນໃດຫາເດືອນໃດ? ນີ້ແມ່ນເດືອນຫຍັງ? ໃນເວລາພັກຮຽນຜ່ານມາຫຼານເຮັດຫຍັງແດ່?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ເດືອນທີ່ເຂົ້າຮຽນມີເດືອນກັນຍາຫາເດືອນມິຖຸນາ ຫຼື ເດືອນເກົ້າຫາເດືອນຫົກ ເດືອນທີ່ພັກຮຽນມີເດືອນກໍລະກົດຫາເດືອນສິງຫາ ຫຼື ເດືອນເຈັດ ຫາ ເດືອນແປດ; ກິດຈະກຳໃນເວລາພັກຮຽນພັກຜ່ອນຢູ່ເຮືອນ, ໄປທ່ຽວຫຼິ້ນກັບພໍ່, ແມ່, ອ້າຍ, ເອື້ອຍ, ນ້ອງຕາມສະຖານທີ່ຕ່າງໆ.
- ໃຫ້ເດັກນ້ອຍທາສີຮູບພາບຄົບໂດຍນຳໃຊ້ສີຕາມໃຈ.

# ລະດູການ





**ຫົວຂໍ້ ການຮຽນອາທິດທີ 4 ລະດູການ:**

1. ລະດູການໃນປະເທດລາວ.
2. ລັກສະນະຂອງອາກາດ.
3. ຄຸນປະໂຫຍດ ແລະ ຜົນສະທ້ອນຂອງລະດູຝົນ.
4. ຄຸນປະໂຫຍດ ແລະ ຜົນສະທ້ອນຂອງລະດູແລ້ງ.
5. ການປະຕິບັດຕົນໃນລະດູແລ້ງ ແລະ ລະດູຝົນ.

# ລະດູການໃນປະເທດລາວ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກລະດູການໃນປະເທດລາວ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ປະເທດລາວເຮົາມີຈັກລະດູ? ຄືລະດູໃດແດ່? ລະດູແລ້ງເລີ່ມແຕ່ເດືອນໃດຫາເດືອນໃດ? ລະດູຝົນເລີ່ມແຕ່ເດືອນໃດຫາເດືອນໃດ?
- ໃຫ້ເດັກນ້ອຍສະຫຼຸບ: ປະເທດລາວມີ 2 ລະດູຄືລະດູແລ້ງ ແລະ ລະດູຝົນ; ລະດູແລ້ງເລີ່ມແຕ່ເດືອນພະຈິກຫາເດືອນເມສາ ຫຼື ເດືອນສິບເອັດ ຫາ ເດືອນສີ່; ລະດູຝົນເລີ້ມແຕ່ເດືອນພຶດສະພາ ຫາເດືອນຕຸລາ ຫຼື ເດືອນຫ້າ ຫາ ເດືອນເກົ້າ.
- ໃຫ້ເດັກນ້ອຍທາສີຮູບພາບເດັກນ້ອຍໃນລະດູຝົນ ແລະ ຮູບພາບໃນລະດູແລ້ງໂດຍນຳໃຊ້ສີຕາມໃຈ.

# ລັກສະນະຂອງອາກາດໃນລະດູແລ້ງ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກລັກສະນະຂອງອາກາດໃນລະດູແລ້ງ; ຝຶກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ລະດູແລ້ງອາກາດເປັນແນວໃດ?
- ໃຫ້ເດັກນ້ອຍສະຫຼຸບ: ລັກສະນະຂອງອາກາດໃນລະດູແລ້ງລະຫວ່າງ ເດືອນພະຈິກ ຫາ ເດືອນກຸມພາ ຫຼື ເດືອນສິບເອັດ ຫາ ເດືອນສອງ ອາກາດໜາວເຢັນ, ບາງຄັ້ງມີນ້ຳໝອກ, ມີລົມພັດ; ລະຫວ່າງເດືອນມີນາຫາເດືອນເມສາ ຫຼື ເດືອນສາມ ຫາ ເດືອນສີ່ອາກາດຮ້ອນອົບເອົ້າ, ແດດກ້າ ແລະ ບາງຄັ້ງອາດມີລົມພາຍຸ.
- ໃຫ້ເດັກນ້ອຍທາສີຮູບພາບເດັກນ້ອຍໂດຍນຳໃຊ້ສີຕາມໃຈ.

# ລັກສະນະຂອງອາກາດໃນລະດູຝົນ




**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກລັກສະນະຂອງອາກາດໃນລະດູຝົນ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ລະດູຝົນອາກາດເປັນແນວໃດ?
- ໃຫ້ເດັກນ້ອຍສະຫຼຸບ: ໃນລະດູຝົນອາກາດຊຸ່ມ, ບາງຄັ້ງອາກາດຈະຮ້ອນອົບເອົ້າ ແລະ ມີຝົນຕົກ ກ່ອນຝົນຈະຕົກທ້ອງຟ້າມືດເຕັມໄປດ້ວຍກ້ອນຂີ້ເຝື້ອ, ມີລົມພັດແຮງ, ມີຟ້າຮ້ອງ, ມີຟ້າແມບເຫຼື້ອມ ແລະ ມີນ້ຳຝົນຕົກລົງມາ.
- ໃຫ້ເດັກນ້ອຍທາສີຮູບພາບເດັກນ້ອຍໂດຍນຳໃຊ້ສີຕາມໃຈ.

# ຄຸນປະໂຫຍດຂອງລະດູຝົນ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຄຸນປະໂຫຍດຂອງລະດູຝົນ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ລະດູຝົນມີຄຸນປະໂຫຍດຫຍັງແດ່?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ຄຸນປະໂຫຍດຂອງລະດູຝົນນ້ຳຝົນຕົກລົງມາເຮັດໃຫ້ດິນຊຸ່ມ, ຕົ້ນໄມ້ຂຽວງາມ, ຊາວນາ, ຊາວສວນມີນ້ຳປູກເຂົ້າ, ປູກຜັກ, ຄົນ, ສັດມີນ້ຳກິນ ແລະ ນ້ຳໃຊ້.
- ໃຫ້ເດັກນ້ອຍທາສີຮູບພາບຄືນໂດຍນຳໃຊ້ສີຕາມໃຈ.

# ຜົນສະທ້ອນຂອງລະດູຝົນ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຜົນສະທ້ອນຂອງລະດູຝົນ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກໍາ:**

- ໃຫ້ເດັກນ້ອຍສັງເກດຮູບພາບ ແລະ ຕອບຄໍາຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ລະດູຝົນມີຜົນສະທ້ອນແນວໃດ?
- ໃຫ້ເດັກນ້ອຍສະຫຼຸບ: ຜົນສະທ້ອນຂອງລະດູຝົນນໍ້າຝົນຕົກລົງມາເຮັດໃຫ້ການໄປມາບໍ່ສະດວກ ເປິເປື້ອນ, ມີນໍ້າຂັງ, ມີຍຸງຫຼາຍ, ພະຍາດໄຂ້ຍຸງລະບາດ, ຝົນຕົກຫຼາຍນໍ້າຖ້ວມ.
- ໃຫ້ເດັກນ້ອຍທາສີຮູບພາບນໍ້າຖ້ວມໂດຍນໍາໃຊ້ສີຕາມໃຈ.

# ຄຸນປະໂຫຍດຂອງລະດູແລ້ງ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຄຸນປະໂຫຍດຂອງລະດູແລ້ງ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ລະດູແລ້ງມີຄຸນປະໂຫຍດຫຍັງແດ່?
- ໃຫ້ເດັກນ້ອຍສະຫຼຸບ: ຄຸນປະໂຫຍດຂອງລະດູແລ້ງຕົ້ນໄມ້ປົ່ງໃບອ່ອນ, ຜັກ, ດອກໄມ້ງາມ, ມີແສງແດດໃຫ້ແສງສະຫວ່າງການໄປ-ມາສະດວກ, ຕາກເຄື່ອງແຫ້ງໄວ, ຕົ້ນໄມ້ອອກດອກ ແລະ ໝາກ.
- ໃຫ້ເດັກນ້ອຍທາສີຮູບພາບເດັກນ້ອຍ ແລະ ຕົ້ນໄມ້ ໂດຍນຳໃຊ້ສີຕາມໃຈ.

# ຜົນສະທ້ອນຂອງລະດູແລ້ງ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຜົນສະທ້ອນຂອງລະດູແລ້ງ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ລະດູແລ້ງມີຜົນສະທ້ອນຫຍັງແດ່?
- ໃຫ້ເດັກນ້ອຍສະຫຼຸບ: ຜົນສະທ້ອນຂອງລະດູແລ້ງ ເມື່ອອາກາດໜາວເຮັດໃຫ້ຜິວໜັງຂອງຄົນເຮົາບາງແຕກແຫ້ງ, ຄົນເຈັບຄໍ, ເປັນໄຂ້ຫວັດ, ອາກາດຮ້ອນດິນແຫ້ງແລ້ງ, ຮ່າງກາຍຮ້ອນອົບເອົ້າ, ອາຫານບູດໄວ, ແມງວັນເກີດຫຼາຍ ແລະ ພະຍາດຖອກທ້ອງລະບາດ.
- ໃຫ້ເດັກນ້ອຍທາສີຮູບພາບຜົນລະທ້ອນຂອງລະດູແລ້ງ ໂດຍນຳໃຊ້ສີຕາມໃຈ.

# ການປະຕິບັດຕົນໃນລະດູແລ້ງ ແລະ ລະດູຝົນ







**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການປະຕິບັດຕົນໃນຍາມໜາວ, ຍາມຮ້ອນ ແລະ ຍາມຝົນຕົກ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ຄວນປະຕິບັດຕົນແນວໃດໃນຍາມໜາວ, ຍາມຮ້ອນ ແລະ ຝົນຕົກ?
- ໃຫ້ເດັກນ້ອຍສະຫຼຸບ: ການປະຕິບັດຕົນໃນຍາມໜາວ ເຮົາຕ້ອງນຸ່ງເຄື່ອງກັນໜາວ ໃສ່ເກີບສຸບໃສ່ໝວກ, ດື່ມ ແລະ ອາບນ້ຳອຸ່ນ; ໃນຍາມຮ້ອນເຮົາຕ້ອງນຸ່ງເຄື່ອງທີ່ບາງ, ອາບນ້ຳ, ຫຼິ້ນຢູ່ບ່ອນຮົ່ມ ເວລາເດີນທາງໄປມາຄວນໃສ່ໝວກ ຫຼື ກັ້ງຄັນຮົ່ມ; ໃນຍາມຝົນເມື່ອເຮົາເດີນທາງໄປມາໃນເວລາຝົນຕົກຄວນກັ້ງຄັນຮົ່ມ ຫຼື ນຸ່ງເສື້ອກັນຝົນ, ບໍ່ນຸ່ງເຄື່ອງປຽກຝົນ ແລະ ເວລາຝົນຕົກຄວນຢູ່ເຮືອນ.
- ໃຫ້ເດັກນ້ອຍທາສີຮູບພາບເດັກນ້ອຍໂດຍນຳໃຊ້ສີຕາມໃຈ.